**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ
ຫ້ອງການ

ເລກທີ 459/ຫກ
ນະຄອນຫຼວງວຽງຈັນ, ວັນທີ 10 ຕຸລາ 2023

# ແຈ້ງການ

**ເຖິງ: ບັນດາສະມາຄົມ, ມູນນິທິ ທີ່ເຄື່ອນໄຫວປະກອບສ່ວນໃນການສະໜັບສະໜູນ, ຊ່ວຍເຫຼືອ ແລະ ພັດທະນາວຽກງານດ້ານສະຫວັດດີການສັງຄົມ ທີ່ນັບຖື.**

**ເລື່ອງ: ການຄັດເລືອກບັນດາສະມາຄົມ, ມູນນິທິ ທີ່ມີຜົນງານໃນການສະໜັບສະໜູນ ຊ່ວຍເຫຼືອ ແລະ ພັດທະນາ ດ້ານສະຫວັດດີການສັງຄົມ ເພື່ອຮັບລາງວັນອາຊຽນ ຄັ້ງທີ 03 ທີ່ ປະເທດ ສສ ຫວຽດນາມ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງພາຍໃນ ສະບັບເລກທີ 225/ພນ, ລົງວັນທີ 16 ພຶດສະພາ 2022;
- ອີງຕາມ ແຈ້ງການຂອງຫ້ອງການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2975/ຫກ, ລົງວັນທີ 03 ຕຸລາ 2023.

ຫ້ອງການກະຊວງພາຍໃນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຫ້ອງການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ປະກາດຮັບສະໝັກບັນດາສະມາຄົມ, ມູນນິທິ ທີ່ໄດ້ປະກອບສ່ວນໃນການສະໜັບສະໜູນ, ຊ່ວຍເຫຼືອ ແລະ ພັດທະນາວຽກງານດ້ານສະຫວັດດີການສັງຄົມ ທີ່ຕິດພັນກັບແມ່ຍິງ, ເດັກນ້ອຍ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ດ້ອຍໂອກາດອື່ນໆ ໃນສັງຄົມ ຕະຫຼອດໄລຍະຜ່ານມາ ເພື່ອສົ່ງຜົນງານຂອງຕົນ ເຂົ້າສະໝັກຄັດເລືອກ ສະເໜີຮັບລາງວັນດີເດັ່ນ ໃນການປະກອບສ່ວນວຽກງານ ດ້ານສະຫວັດດີການສັງຄົມ ແລະ ການພັດທະນາອາຊຽນ ຄັ້ງທີ 3 ທີ່ຈະຈັດຂຶ້ນໃນ ເດືອນພະຈິກ 2023 ທີ່ປະເທດ ສສ ຫວຽດນາມ.

ສໍາລັບມາດຖານ ແລະ ເງື່ອນໄຂ ຂອງສະມາຄົມ, ມູນນິທິ ທີ່ສະໝັກຄັດເລືອກ ປະກອບມີດັ່ງນີ້:

1. ເປັນສະມາຄົມທີ່ສ້າງຕັ້ງ ຫຼື ເຄື່ອນໄຫວພາຍໃຕ້ດໍາລັດສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017, ມີໃບທະບຽນສະມາຄົມ, ຕໍ່ໃບທະບຽນປະຈໍາປີ ແລະ ສົ່ງບົດລາຍງານປະຈໍາປີໃຫ້ອົງການຄຸ້ມຄອງ ທັນຕາມກໍານົດ. ສໍາລັບມູນນິທິ ຕ້ອງແມ່ນມູນນິທິ ທີ່ສ້າງຕັ້ງ ຫຼື ເຄື່ອນໄຫວພາຍໃຕ້ດໍາລັດສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ມີການສົ່ງບົດລາຍງານປະຈໍາປີ ໃຫ້ອົງການຄຸ້ມຄອງ ທັນຕາມກໍານົດເວລາທຸກປີ;
2. ເປັນສະມາຄົມ, ມູນນິທິ ທີ່ມີຈຸດປະສົງໃນການດໍາເນີນງານ ທີ່ກ່ຽວຂ້ອງໃນການສະໜັບສະໜູນຊ່ວຍເຫຼືອດ້ານສະຫວັດດີການສັງຄົມ ແລະ ການພັດທະນາ ທີ່ຕິດພັນກັບແມ່ຍິງ, ເດັກນ້ອຍ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ດ້ອຍໂອກາດອື່ນໆ ໃນສັງຄົມໂດຍບໍ່ຫວັງຜົນກໍາໄລ;

3. ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດການດຳເນີນໂຄງການ/ກິດຈະກຳ ການສະໜັບສະໜູນ, ຊ່ວຍເຫຼືອດ້ານສະຫວັດດີການສັງຄົມ ແລະ ການພັດທະນາ ທີ່ຕິດພັນກັບແມ່ຍິງ, ເດັກນ້ອຍ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ດ້ອຍໂອກາດອື່ນໆ ໃນສັງຄົມ ທີ່ເປັນຮູບປະທຳຢ່າງ ໜ້ອຍ 3 ປີ ແລະ ມີການເຄື່ອນໄຫວຢ່າງຕໍ່ເນື່ອງ;
4. ມີຂໍ້ມູນຜົນສຳເລັດໃນການດຳເນີນໂຄງການ/ກິດຈະກຳ ການສະໜັບສະໜູນ ຊ່ວຍເຫຼືອດ້ານສະຫວັດດີການສັງຄົມ ແລະ ການພັດທະນາ ທີ່ຕິດພັນກັບແມ່ຍິງ, ເດັກນ້ອຍ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ດ້ອຍໂອກາດອື່ນໆ ໃນສັງຄົມ ຍ້ອນຫຼັງທີ່ສາມາດກວດສອບໄດ້ ຢ່າງໜ້ອຍບໍ່ຕ່ຳກວ່າ 3 ປີ;
5. ສະມາຄົມ, ມູນນິທິ ທີ່ຖືກຄັດເລືອກ ຕ້ອງມີຄວາມສາມາດໄປຮັບລາງວັນຢູ່ປະເທດ ສສ ຫວຽດນາມ ໄດ້ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ຂອງພາກສ່ວນຕົນເອງ ໃນການເຂົ້າຮ່ວມພິທີມອບລາງວັນດີເດັ່ນດ້ານສະຫວັດດີການສັງຄົມ ແລະ ການພັດທະນາອາຊຽນ ຮ່ວມກັບບັນດາປະເທດສະມາຊິກອາຊຽນ.

ພາກສ່ວນໃດທີ່ມີຄວາມສົນໃຈ ສາມາດສັງລວມຜົນງານຂອງຕົນ ຕາມແບບຟອມ, ມາດຖານ ແລະ ເງື່ອນໄຂທີ່ຄະນະກຳມະການກຳນົດໄວ້ ໂດຍນຳສົ່ງຜົນງານ ໃຫ້ກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອສັງລວມ ແລະ ດຳເນີນຂັ້ນຕອນການຄັດເລືອກ ບໍ່ໃຫ້ກາຍວັນທີ 16 ຕຸລາ 2023. ເບີໂທລະສັບ/ວ໋ອດແອັບ: 020 7787 0492, ອີເມວ: neeny_khamkhosy@hotmail.com. ສຳເນົາການສົ່ງ CC: chitdavanh@yahoo.com, csodivision@gmail.com. (ລາຍລະອຽດ ມີແບບຟອມຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາ ຕາມສົມຄວນດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງພາຍໃນ
ຫ້ອງການ

ນ. ວິໄລທອນ ສູນທອນ ໄຊມົງຄຸນ

**ບ່ອນນຳສົ່ງ:**

1. ຄະນະປະສານງານອົງການຈັດຕັ້ງສັງຄົມລາວ 01 ສະບັບ;
2. ບັນດາສະມາຄົມ, ມູນນິທິ ກ່ຽວຂ້ອງ 01 ສະບັບ;
3. ເກັບຮັກສາໄວ້ 01 ສະບັບ.